ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ການສະຫວັດດີການສັງຄົມ

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ 689 /ຫຄຊກລ.ຄພ

ນະຄອນຫລວງວຽງຈັນ, ວັນທີ 24 ສິງຫາ 2023

**ບົດລາຍງານຜົນຂອງການລົງຕິດຕາມກວດກາ ການເຄື່ອນໄຫວວຽກງານເກັບກູ້ລະເບີດ ຂອງອົງການ ຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ (NPA).**

## I. ພາກສະເໜີ.

ປະຕິບັດຕາມຂໍ້ຕົກລົງ ຂອງຫົວໜ້າຫ້ອງການ ສະບັບເລກທີ 657/ຫຄຊກລ.ບຫ ລົງວັນ 11 ສິງຫາ 2023 ວ່າດ້ວຍການແຕ່ງຕັ້ງ ໜ່ວຍງານຄຸ້ມຄອງຄຸນນະພາບ ລົງຕິດຕາມກວດກາ ການປະຕິບັດງານຂອງອົງການ ຊ່ວຍຫຼືອລ້າປະຊາຊົນນ໊ອກແວ, ປະຈຳ ແຂວງ ອັດຕະປື, (NPA) ທີ່ເຄື່ອນໄຫວດຳເນີນງານຕາມບົດບັນທຶກຄວາມ ເຂົ້າໃຈ ແລະ ປະຕິບັດຕາມມາດຕະຖານການປະຕິບັດງານ (SOP) ເລີ່ມແຕ່ວັນທີ່ 13 ຫາ 21 ສິງຫາ 2023 ໃນ ການກວດກາຄັ້ງນີ້ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ແລະ ພະນັກງານ ຄຄກລ ແຂວງ ອັດຕະປື ເຂົ້າ ຮ່ວມຕິດຕາມຄະນະກວດກາມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ວິໄລສັກ ວົງຊາຍະຈັນ ຫົວໜ້າໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
2. ທ່ານ ບຸນຮຽງ ສຸກຈັນທະລາວົງ ວິຊາການໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
3. ທ່ານ ພວງສອນ ໄຊສົມບັດ ວິຊາການໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
4. ທ່ານ ພູວົງ ສີສະໜັກ, ວິຊາການໜ່ວຍງານຄຸ້ມຄອງຄຸນະພາບ/ຂັບລົດ ຫ້ອງການ ຄຊກລ.
5. ທ່ານ ສອນໄຊ ພົມມະທຳ, ແພດປະຈຳໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
6. ທ່ານ ກິດວົງໄຊ ພຸດທະວົງ ວິຊາການ ຄຄກລຂ ອັດຕະປື.
7. ທ່ານ ກ້ອຍ ຈັນວິໄລວັນ ວິຊາການ ຄຄກລຂ ອັດຕະປື.

**ພາກສ່ວນອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວປະຈຳແຂວງອັດຕະປື.**

1. ທ່ານ ສຸກສົມສີ ແສນກັນຍາ ຜູ້ປະສານງານ ປະຈຳ ແຂວງ ອັດຕະປື ຂອງອົງການຊ່ວຍເຫຼືອລ້າຂອງປະຊາ ຊົນນໍອກແວ.
2. ທ່ານ ນ. ມະນີວັນ ທຳມະບຸດ ຫົວໜ້າແພດສະໜາມ ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ.

## II. ຈຸດປະສົງ.

ເພື່ອຕິດຕາມກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ສັງເກດນັກວິຊາ ການ, ການບໍລິຫານຄຸ້ມຄອງບັນຊາການ, ທາງດ້ານເຕັກນິກການປະຕິບັດສຳຫຼວດບໍ່ແມ່ນດ້ານວິຊາການ, ສຳຫຼວດດ້ານວິຊາການ, ກວດກູ້ ແລະ ທຳລາຍລະເບີດຢູ່ພາກສະໜາມໃຫ້ມີປະສິດທິພາບ ແລະ ຄວາມປອດ ໄພ ເພື່ອປັບປຸງການປະຕິບັດງານຕິດຕາມຄວາມຄືບໜ້າໃນການຈັດຕັ້ງແຜນ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອ ກະພາບໃນມາດຕະຖານອັນດຽວກັນ.

## III. ການເຄື່ອນໄຫວຂອງຄະນະກວດກາ.

ຄະນະກວດກາຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບຜູ້ຊີ້ນຳ, ຝ່າຍປະຕິບັດງານພາກສະໜາມ ຜູ້ຮັບຜິດຊອບ ວຽກງານພາກສະໜາມ ຂອງອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ, ເພື່ອລົງຕິດຕາມກວດກາ

ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສຳຫຼວດ, ກວດກູ້ ແລະ ທຳລາຍລະເບີດຢູ່ພາກສະໜາມທີ່ໄດ້ກຳນົດໃນແຜນປະຈຳປີ 2023.

## IV. ພາກສ່ວນຫ້ອງການ.

ຫ້ອງການອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (NPA) ປະຈຳແຂວງອັດຕະປື ປະຈຸບັນມີພະນັກງານທັງໝົດ 193 ຄົນ, ພາກສ່ວນຫ້ອງການມີ 08 ຄົນ, ຍິງ 01 ຄົນ, ປະກອບມີ 11 ທີມງານຄື: ໂຄສະນາສຶກສາຄວາມສ່ຽງ 01 ທີມ, ສຳຫຼວດທາງດ້ານວິຊາການ 02 ທີມ ແລະ ທີມງານກວດກູ້ 08 ທີມ, ພາກສ່ວນສະໜາມປະກອບມີ 185 ຄົນ, ຍິງ 49 ຄົນ (ມີທີມງານສະໜັບສະໜູນການກວດກູ້ ມາແຕ່ ແຂວງ ຈາກແຂວງ ສາລະວັນ ຈານວນ 04 ທີມ, ມີຄື: ທີມງານກວດກູ້ 03 ທີມ, ທີມງານສຳຫຼວດ 01 ທີມ, ການເຄື່ອນໄຫວວຽກງານສຳຫຼວດກວດກູ້ ແລະ ທຳລາຍລະເບີດຢູ່ 05 ເມືອງຄື: ສາມັກຄີໄຊ, ເມືອງໄຊເສດຖາ, ສະໜາມໄຊ, ຊານໄຊ ແລະ ເມືອງພູວົງ ໃນແຜນປີ 2023.

**ກິດຈະກຳຜົນສຳເລັດຜ່ານມາຂອງແຕ່ລະໜ້າວຽກແຕ່ເດືອນທີ 01 ຫາ 07 /2023 ມີຄື :**

- ວຽກງານກວດກູ້ປົດປ່ອຍເນື້ອທີ່ດິນຕາມແຜນປີ (MOU) ສາມາດກວດກູ້ເນື້ອທີ່ໄດ້ແລ້ວ 799,422 $ມ^2$, ສາມາດກວດກູ້ ແລະ ທຳລາຍລະເບີດໄດ້ຄືດັ່ງນີ້: ປະເພດບົມບີ້ 307 ໜ່ວຍ ແລະ ສຳພາວຸດອື່ນໆຈຳນວນ 23 ລູກ, ມີຜູ້ໄດ້ຮັບຜົນປະໂຫຍດຈຳນວນ 4,228 ຄົນ, ຊາຍ 1,859 ຄົນ, ຍິງ 2,369 ຄົນ, ສ່ວນພື້ອທີ່ຍັງເຫຼືອແມ່ນທາງອົງການເອັນພີເອຈະດຳເນີນການກວດກູ້ຕໍ່ໄປເພື່ອໃຫ້ສຳເລັດຕາມແຜນການທີ່ວາງໄວ້.
- ວຽກງານສຳຫຼວດພື້ນທີ່, ແຕ່ເດືອນທີ 01 ຫາ 08 2023, ສາມາດສຳຫຼວດພື້ນທີ່ໄດ້ 1,028,266 ຕາແມັດ, ສຳຫຼວດພົບລະເບີດລູກຫວ່ານຈຳນວນ 59 ໜ່ວຍ, ມີຜູ້ໄດ້ຮັບຜົນປະໂຫຍດຈຳນວນ 693 ຄົນ, ຊາຍ 362 ຄົນ, ຍິງ 331 ຄົນ.

## V. ຕິດຕາມກວດກາພາກສະໜາມ.

ລົງຢ້ຽມຢາມສະໜາມທີ່ກຳລັງກວດກູ້ ທີມງານ BAC 16,19, 31, ບ້ານ ເຜົ່າສຳພັນ ເມືອງ ຊານໄຊ ແຂວງອັດຕະປື ID: NPA-AC-2023-1701036-052, ມີຫົກທີມງານ ມີພະນັກງານທັງໝົດ 56 ຄົນ, ຫົວໜ້າທີມ 02 ຄົນ, ຮອງທີມ 06 ຄົນ, ນັກສຳຫຼວດ 29 ຄົນ, ແພດ 01 ຄົນ, ຜູ້ຄວບຄຸມຖາງປ່າ 01 ຄົນ, ພະນັກງານຖາງປ່າ 15 ຄົນ, ພະນັກງານຮັບຜິດຊອບແຄ້ມ 02 ຄົນ, ສະໜາມດັ່ງກ່າວເປັນດິນກະສິກຳ ມີເນື້ອທີ່ທັງໝົດ 102,763 $ມ^2$ ກວດກູ້ສຳເລັດແລ້ວ 78,030 $ມ^2$ ເນື້ອທີ່ຍັງເຫຼືອ 24,733 $ມ^2$ ວັນທີ່ເລີ່ມຕົ້ນ 15/07/2023 ຄາດວ່າຈະສຳເລັດໃນວັນທີ່ 02/09/2023, ປັດຈຸບັນພົບລູກລະເບີດປະເພດ blu 26 ຈຳນວນ 14 ໜ່ວຍ, ນຳໃຊ້ເຄື່ອງກວດກ້ວາງວາລອນ (Vallon VMXC 1-3/10). ມີຜູ້ທີ່ໄດ້ຮັບຜົນປະໂຫຍດ 02 ຄອບຄົວ, ຈຳນວນ 15 ຄົນ, ຊາຍ 06 ຄົນ, ຍິງ 09 ຄົນ,

ສະໜາມດັ່ງກ່າວທາງທີມງານຄຸ້ມຄອງຄຸນະພາບ ຫ້ອງການ ຄຊກລ ຍັງໄດ້ຕິດຕາມການສາທິດແຜນຮັບມືອຸປະຕິເຫດປະຈຳສະໜາມ (ອາການຄົນເຈັບແມ່ນຂາກຸດເບື້ອງຂວາ ບາດແຜໜ້າເອິກ ບາດແຜຄາງ ແລະ ດັງ)ທີມງານສັງເກດເຫັນ ການຈັບທ່າຄົນເຈັບຢູ່ເທິງປະລັງກາ ຍັງເຮັດບໍ່ທັນຖືກຕ້ອງຕາມເຕັກນິກ. ແລະ ຕິດຕາມການທຳລາຍລະເບີດລູກຫວ່ານປະເພດບົມບີ້ (blu 26) ຈຳນວນ 01 ໜ່ວຍ, ຈຸດພິກັດ (GPS) 703813-1641018

ທາງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ຍັງໄດ້ຕິດຕາມການທຳລາຍ ລບຕ ປະເພດລະເບີດ (BLU26) ທີ່ນັກວິຊາການເກັບກູ້ກວດພົບຢູ່ສະໜາມຈຳນວນ 01 ໜ່ວຍ(ຈຸດພິກັດ(48q GPS) 703813-1641018) ຜ່ານການຕິດຕາມການທຳລາຍຕົວຈິ່ງຢູ່ພາກສະໜາມຂອງຫົວໜ້າທີມງານອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ, ແມ່ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເວລາເກີດເຫດຢູ່ໃນສະໜາມ ຫົວໜ້າມທີມບໍ່ໄດ້ແຕ່ງຕັ້ງອ້າຍນ້ອງຮັກບໍລິເວນສາສະໜາມ.

ລົງສະໜາມ ສຳຫຼວດທາງດ້ານວິຊາການ (TS) ບ້ານ ດອນແຄນ, ເມືອງ ຊານໄຊ, ແຂວງ ອັດຕະປື, ວັນທີ ເລີ່ມຕົ້ນ 07/03/2023, ສຳເລັດວັນທີ 15/08/2023 ສຳຫຼວດພື້ນທີ່ໄດ້ 973,987 ຕາແມັດ, ສຳຫຼວດພົບລະເບີດບໍ່ທັນແຕກໄດ້ທັງໝົດປະເພດບົມບີ້ 52 ໜ່ວຍ, ກຳນົດບ້ອກສີແດງໄດ້ 52 ບ້ອກ, ສີຂຽວ 196 ບ້ອກ, ສີເຫຼືອງ 98 ບ້ອກ, ສີເທົາ 03 ບ້ອກ ແລະ ບ້ອກສີຂາວໄດ້ 247 ບ້ອກ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 183 ຄົນ ຊາຍ 85 ຄົນ, ຍິງ 98 ຄົນ.

ວຽກງານຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ ທາງທີມງານໄດ້ລົງສຸ່ມກວດເຮັດເປັນບ້ອກກວດຈຸດທີ່ມີຂໍ້ມູນລະເບີດ ຕົວຈິງຢູ່ສະໜາມຢູ່ຈຳນວນ 05 ບ້ານ, 09 ສະໜາມຄື: ບ້ານ ກະໂສມ ຈຳນວນ 03 ສະໜາມ, ບ້ານ ໝື່ນຫົວເມືອງ, ຈຳນວນ 01 ສະໜາມ, ບ້ານ ຣົມ ຈຳນວນ 02 ສະໜາມ, ເມືອງ ສາມັກຄີໄຊ ແຂວງ ອັດຕະປື, ແລະ ບ້ານ ມູນ ຈຳນວນ 02 ສະໜາມ, ບ້ານ ແກ້ງໄຊ ຈຳນວນ 01 ສະໜາມ, ເມືອງ ຊານໄຊ ແຂວງ ອັດຕະປື, ລາຍລະອຽດຄື:

1. Tak ID: NPA_AC_2023_1702037_005 Area = 13,780 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 20x25x1 bok=500 ມ$^2$, ຄິດເປັນເປີເຊັນເທົ່າກັບ 7,25 %
2. Tak ID: NPA_AC_2023_1702037_006 Area = 39,390 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 22x25x2 bok=1,000 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,53 %
3. Tak ID: NPA_AC_2023_1702037_007 Area = 33,255 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 30x25x1 bok=750 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,25 %
4. Tak ID: NPA_AC_2023_1702043_014 Area = 58,550 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 30x25x2 bok=1,500 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,56 %
5. Tak ID: NPA_AC_2023_1702021_003 Area = 29,045 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 16x50x1 bok=800 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,75 %
6. Tak ID: NPA_AC_2023_1702021_002 Area = 25,445 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 30x25x1 bok=750 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,94 %
7. Tak ID: NPA_AC_2023_1704021_002 Area = 104,150 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 30x40x2 bok=3,025 ມ$^2$, ຄິດເປັນເປີເຊັນເທົ່າກັບ 2,90 %
8. Tak ID: NPA_AC_2023_1704021_005 Area = 63,550 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 30x40x1 bok=1,200 ມ$^2$, ຄິດເປັນເປີເຊັນເທົ່າກັບ 1,88 %
9. Tak ID: NPA_AC_2023_1701022_005 Area = 15,877 ມ$^2$,ຄວບຄຸມຄຸນນະພາບບໍ່ຫຼຸດ 2 ສ່ວນຮ້ອຍເທົ່າກັບ 25x25x1 bok=625 ມ$^2$, ຄິດເປັນເປີເຊັນເທົ່າກັບ 3,93 %.

   ຜ່ານການກວດກາ ຄວບຄຸມຄຸນນະພາບທັງ 09 ສະໜາມ ດັ່ງກ່າວກໍ່ເຫັນວ່າມີຄວາມປອດໄພບໍ່ພົບສິ້ນສ່ວນສະເກັດທີ່ໃຫ່ຍກວ່າມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້ເຄິ່ງໜຶ່ງຂອງບົມບີ້ blu 26 (½ blu 26) ສະເລ່ຍເປັນເປີເຊັນສະໜາມທັງໝົດ ເທົ່າກັບ 28,99%).

## VI. ດ້ານດີ.

ຜ່ານການລົງຕິດຕາມກວດກາຢູ່ຫ້ອງການ ແລະ ພາກສະໜາມຕົວຈິງສາມາດສະຫຼຸບສັງລວມໄດ້ດັ່ງລຸ່ມນີ້: ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ, ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດບໍ່ແມ່ນວິຊາການ, ບົດລາຍງານການສຳຫຼວດທາງດ້ານວິຊາການ, ບົດລາຍງານຜົນສຳເລັດຂັ້ນສາມ, ແບບຟອມຄວບຄຸມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່

ບໍ່ສາມາດພິສູດໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດຂອງພະນັກງານເອກະສານອື່ນໆ ເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານ ແລະ ສອດຄ່ອງຕາມມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

- ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການເຝິກອົບຮົມຈາກອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ.
- ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດງານທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື້ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ, ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້ ແລະ ແຜນເຄື່ອນຍ້າຍຄົນເຈັບ.
- ການເຄື່ອນໄຫວວຽກງານກວດກູ້ຂອງທີມງານແມ່ນຈະເຮັດການທຳລາຍໄປພ້ອມກັນໃນກໍລະນີທີ່ກວດພົບລະເບີດທີ່ບໍ່ສາມາດເຄື່ອນຍ້າຍໄດ້ແມ່ນຈະໄດ້ເຮັດການທຳລາຍໃນມື້ນັ້ນເລີຍ.
- ພາຍຫຼັງສຳເລັດການເກັບກູ້ໃນບ໋ອກໃດໜຶ່ງ ຮອງຫົວໜ້າທີມ ຈະຄວບຄຸມຄຸນນະພາບ 30% ຫົວໜ້າທີມຈະໄດ້ກວດກາຄຸນນະພາບໃນບ໋ອກດັ່ງກ່າວ15%ເມື່ອສຳເລັດ.
- ຖ້າກວດກູ້ສະໜາມທັງໝົດສຳເລັດແມ່ນຜູ້ຊ່ວຍວິຊາການຂັ້ນ 4 ຈະລົງກວດກາຄຸນນະພາບ 2% ແລະ ວິຊາການຂັ້ນ 4 ຈະລົງກວດກາຄຸນນະພາບ 2% ອີກເທື່ອໜຶ່ງຈຶ່ງສາມາດເຮັດໃບມອບຮັບເນື້ອທີ່ດິນດັ່ງກ່າວໃຫ້ເຈົ້າຂອງໄປນຳໃຊ້ໄດ້.

## VII. ຂໍ້ຄົງຄ້າງທີ່ຕ້ອງແກ້ໄຂ.

ຜ່ານການຕິດຕາມກວດກາຂອງທີມງານກວດກາຄຸນນະພາບພາຍນອກສະຫຼຸບໄດ້ວ່າ:

1. ແບບຟອມບັນທຶກລວມທາດແຕກມີຂໍ້ມູນຖືກຕ້ອງ, ແຕ່ນຳໃຊ້ຕົວຈິງ, ຫົວໜ້າທີມງານສະໜາມກວດກູ້ (BAC 19) ບໍ່ໄດ້ຈົດ ແລະ ບັນທຶກໃສ່ແບບຟອມການນຳໃຊ້ທາດແຕກ, ປະຈຳວັນ, ການລາຍງານຈຳນວນເຫັນວ່າບໍ່ຖືກຕ້ອງກັບຕົວຈິງ.
2. ແນະນຳ ໃຫ້ຜູ້ຊ່ວຍແພດເອົາໃຈໃສ່ຕື່ມ ການຈັບທ່າຄົນເຈັບຢູ່ເທິງປະລັງກາ ໃນການຊ່ວຍປະຖົມພະຍາບານຄົນເຈັບ ຍັງເຮັດບໍ່ທັນຖືກຕ້ອງຕາມເຕັກນິກ.
3. ຜ່ານການກວດກາ ແລະ ຄວບຄຸມຄຸນນະພາບທັງ 09 ສະໜາມ, ມີເນື້ອທີ່ລວມ 383,042 ຕາແມັດ, ເນື້ອທີ່ຄວບຄຸມຄຸນນະພາບ 10,150 ຕາແມັດ, ຄິດໄລ່ເປັນເປີເຊັນທັງ 09 ສະໜາມ, ເທົ່າກັບ 28,99 % ຜ່ານການກວດກາ ແລະ ຄວບຄຸມຄຸນນະພາບ ກໍ່ເຫັນວ່າມີຄວາມປອດໄພ, ບໍ່ພົບສິ້ນສ່ວນສະເກັດທີ່ໃຫ່ຍກວ່າມາດຕະຖານແຫ່ງຊາດ, ທີ່ໄດ້ກຳນົດໄວ້ເຄິ່ງໜຶ່ງຂອງບົມບີ້ blu 26 (½ blu 26).

ໂດຍລວມແລ້ວອົງການ ຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ, ປະຈຳແຂວງ ອັດຕະປື, ໃນການປະຕິບັດວຽກ ງານການເກັບກູ້ຢູ່ພາກສະໜາມເຫັນວ່າມີຄຸນນະພາບດີ, ມີປະສິດທິພາບ, ມີຄວາມປອດໄພ ແລະ ການເຄື່ອນໄຫວວຽກງານແມ່ນອີງໃສ່ມາດຖານການປະຕິບັດງານ SOP ຂອງອົງການ, ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ** | **ຫົວໜ້າໜ່ວຍ ງານຄຸ້ມຄອງຄຸນນະພາບ**

ໂຈນແຍງ ແພງທອງສະຫວັດ

**ບ່ອນນຳສົ່ງ:**
- ອົງການ NPA ວຽງຈັນ ແລະ ແຂວງອັດຕະປື "ເພື່ອຈັດຕັ້ງປະຕິບັດ"
  ຫ້ອງການ ຄຄກລ ແຂວງອັດຕະປື "ເພື່ອລາຍງານ"
- ຫ້ອງການ ຄຊກລ ເກັບມ້ຽນ

ບ້ານ ສີສັງວອນ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262386, ແຟັກ: 856 21 2628396; ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la